**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 4565 /ກປ

ນະຄອນຫຼວງວຽງຈັນ, ວັນທີ: 06 SEP 2024

# ຂໍ້ຕົກລົງ
## ວ່າດ້ວຍ ການຄຸ້ມຄອງກາກບອນປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 4566/ກປມ, ລົງວັນທີ 21 ສິງຫາ 2024;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 3428/ຫກ, ລົງວັນທີ 04 ກັນຍາ 2024.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງກາກບອນປ່າໄມ້ ເພື່ອສ້າງຄວາມພ້ອມສຳລັບການລົງທຶນ, ການເຂົ້າເຖິງຕະຫຼາດ ແລະ ການຮ່ວມມືໃນໂຄງການຕ່າງໆ ແບບຫຼາຍຝ່າຍ, ສອງຝ່າຍ ແລະ ການລົງທຶນຮ່ວມກັບລັດແບບຄູ່ຮ່ວມງານ, ໝູນໃຊ້ທ່າແຮງດ້ານງົບປະມານ ຂອງໂຄງການຕ່າງໆ ເຂົ້າໃນວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ໃຫ້ເຂົ້າສູ່ລະບົບການຄຸ້ມຄອງສາມປະເພດປ່າ ລວມທັງການສົ່ງເສີມການປູກໄມ້ ແລະ ຟື້ນຟູປ່າ ແນໃສ່ສ້າງລາຍຮັບທີ່ແນ່ນອນ ໂດຍທາງກົງ ແລະ ທາງອ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຂອງທ້ອງຖິ່ນ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງກາກບອນປ່າໄມ້**

ການຄຸ້ມຄອງກາກບອນປ່າໄມ້ ແມ່ນການຄຸ້ມຄອງບັນດາກິດຈະການ ກ່ຽວກັບກາກບອນປ່າໄມ້, ການພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການ, ການຕະຫຼາດ, ນະໂຍບາຍປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ, ການມີສ່ວນຮ່ວມ, ການແບ່ງປັນຜົນປະໂຫຍດ ຕາມມາດຕະຖານສາກົນ ພ້ອມທັງໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພື້ນທີ່ໂຄງການກາກບອນປ່າໄມ້ ແບບຄູ່ຮ່ວມງານກັບລັດຖະບານ** ໝາຍເຖິງ ທີ່ດິນປ່າໄມ້

ທີ່ຜູ້ລົງທຶນໄດ້ຮັບອະນຸຍາດຈາກ ລັດຖະບານ ໃຫ້ດຳເນີນທຸລະກິດ ປ່າໄມ້ ດ້ານກາກບອນ ແຕ່ບໍ່ແມ່ນການສຳປະທານທີ່ດິນປ່າໄມ້ ຊຶ່ງມີຄວາມແຕກຕ່າງຈາກພື້ນທີ່ການລົງທຶນເຊົ່າ-ສຳປະທານທີ່ດິນ, ການຂຸດຄົ້ນແຮ່ທາດ ຫຼື ການພັດທະນາໄຟຟ້າພະລັງນ້ຳ;

**2. ການຮັບຮູ້ສິດຂອງຜູ້ອື່ນໃນພື້ນທີ່ໂຄງການ** ໝາຍເຖິງ ການຮັບຮູ້ສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີການປະກອບສ່ວນໃນການຟື້ນຟູປ່າ ແລະ ປູກໄມ້ ເກີດສິນເຊື່ອກາກບອນໃນພື້ນທີ່ຂອງໂຄງການ ແລະ ຮັບປະກັນການແບ່ງປັນຜົນປະໂຫຍດ ຈາກການຂາຍກາກບອນປ່າໄມ້ ຕໍ່ຜູ້ມີສິດດັ່ງກ່າວ;

**3. REDD+ (Reducing Emissions from Deforestation and forest Degradation)** ໝາຍເຖິງ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ. ສຳລັບເຄື່ອງໝາຍບວກ (+) ໝາຍເຖິງ ກິດຈະການປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງແມ່ນການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ແບບຍືນຍົງ ເພື່ອເປົ້າໝາຍການເກັບກັກທາດກາກບອນປ່າໄມ້;

**4. ກາກບອນປ່າໄມ້** ໝາຍເຖິງ ທາດອາຍກາກໂບນິກ ($CO_2$) ທີ່ປ່າໄມ້ສາມາດດູດຊຶບໂດຍໃຊ້ຫົວໜ່ວຍຄິດໄລ່ ເປັນໂຕນ ຕໍ່ ເຮັກຕາ;

**5. ສິນເຊື່ອກາກບອນປ່າໄມ້** ໝາຍເຖິງ ປະລິມານການຫຼຸດຜ່ອນການປ່ອຍ, ການດູດຊຶບ ແລະ ການເກັບກັກ ທາດອາຍກາກໂບນິກ ($CO_2$) ຊຶ່ງຄິດໄລ່ເປັນຫົວໜ່ວຍ ໂຕນກາກໂບນິກທຽບເທົ່າ ($tCO_{2e}$) ຈາກບັນດາໂຄງການ ຫຼື ກິດຈະການຕ່າງໆ ແລະ ໄດ້ຜ່ານການຮັບຮອງປະລິມານການຫຼຸດຜ່ອນການປ່ອຍ, ການດູດຊຶບ ແລະ ການເກັບກັກ ເພື່ອປະກອບສ່ວນການຫຼຸດຜ່ອນທາດອາຍເຮືອນແກ້ວ, ການແລກປ່ຽນ ແລະ ການຄ້າຂາຍ ສິນເຊື່ອກາກບອນປ່າໄມ້ ໂດຍສອດຄ່ອງກັບມາດຕະຖານຫຼຸດຜ່ອນທາດອາຍເຮືອນແກ້ວ.

**6. ການຢັ້ງຢືນກາກບອນປ່າໄມ້** ໝາຍເຖິງ ກາກບອນປ່າໄມ້ ທີ່ຜ່ານການກວດສອບ ແລະ ຢັ້ງຢືນ ຈາກອົງການຈັດຕັ້ງສາກົນ;

**7. ສິດໃນການຖືຄອງກາກບອນປ່າໄມ້** ໝາຍເຖິງ ສິດ ທາງດ້ານກົດໝາຍ ຕໍ່ສິນເຊື່ອກາກບອນທີ່ຜະລິດຂຶ້ນຈາກການລົງທຶນ, ການປະກອບສ່ວນ ໃນການຈັດຕັ້ງປະຕິບັດ ໂຄງການກາກບອນປ່າໄມ້, ໄດ້ຮັບສິດຜ່ານການຊື້ ຫຼື ໄດ້ຮັບການມອບໂອນ ຈາກຜູ້ອື່ນ;

**8. ການດູດຊຶບທາດອາຍກາກໂບນິກ ($CO_2$)** ໝາຍເຖິງ ການຫຼຸດຜ່ອນທາດອາຍເຮືອນແກ້ວຜ່ານການດູດຊຶບ ແລະ ການເກັບກັກ ທາດອາຍກາກໂບນິກ ຂອງຕົ້ນໄມ້, ພືດ ແລະ ປ່າໄມ້;

**9. ໂຕນກາກໂບນິກທຽບເທົ່າ ($tCO_{2e}$)** ໝາຍເຖິງ ຫົວໜ່ວຍມາດຕະຖານ ທີ່ຖືກນຳໃຊ້ເພື່ອວັດແທກ ປະລິມານທາດອາຍເຮືອນແກ້ວ ແລະ ສາມາດນຳໃຊ້ ໃນທຸກທາດຂອງທາດອາຍເຮືອນແກ້ວ ໂດຍການສົມທຽບ;

**10. ໜ່ວຍງານຢັ້ງຢືນກາກບອນປ່າໄມ້ເອກະລາດ** ໝາຍເຖິງ ໜ່ວຍງານທີ່ມີ ຄວາມຊຳນານງານ ກ່ຽວກັບ ການຄິດໄລ່ ແລະ ການຢັ້ງຢືນ ປະລິມານການຫຼຸດຜ່ອນການປ່ອຍ, ການດູດຊຶບ ແລະ ການເກັບກັກທາດອາຍເຮືອນແກ້ວ ຊຶ່ງເປັນທີ່ຍອມຮັບ ແລະ ຢັ້ງຢືນຈາກສາກົນ;

**11.ໃບຢັ້ງຢືນໂຄງການກາກບອນປ່າໄມ້** ໝາຍເຖິງ ເອກະສານ ທີ່ເປັນຫຼັກຖານຕົ້ນຕໍ ທີ່ຢັ້ງຢືນສິດໃຫ້ແກ່ຜູ້ທີ່ເປັນເຈົ້າຂອງໂຄງການ ກາກບອນປ່າໄມ້ ແລະ ໃບຢັ້ງຢືນໂຄງການ ກາກບອນປ່າໄມ້ ມີອາຍຸການນຳໃຊ້ຕະຫຼອດໄລຍະໂຄງການ ຫຼື ຕາມການຕົກລົງໃນສັນຍາ;

**12. ຄໍເລດສະປອນດິງແອັດຈັດສະເມັນ (Corresponding adjustment)** ໝາຍເຖິງ ກົນໄກການຮັບຮອງ ແລະ ຢັ້ງຢືນການດັດປັບສັນຍາ ທີ່ຄູ່ສັນຍາ ຝ່າຍໃດໜຶ່ງ ໄດ້ເຈດຕະນາໂອນກາກບອນປ່າໄມ້ໃຫ້ຄູ່ສັນຍາຂອງຕົນ ຕາມມາດຕະຖານສາກົນ.

**ມາດຕາ 4 ຫຼັກການ ກ່ຽວກັບການຄຸ້ມຄອງວຽກງານກາກບອນປ່າໄມ້**

ການຄຸ້ມຄອງ ວຽກງານກາກບອນປ່າໄມ້ ຕ້ອງຮັບປະກັນຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ຍຸດທະສາດ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ;

2. ຄຸ້ມຄອງປ່າໄມ້ລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ;

3. ຮັບປະກັນ ຄວາມໂປ່ງໃສ, ຍຸຕິທຳ, ສາມາດກວດສອບໄດ້;

4. ຮັບປະກັນການມີສ່ວນຮ່ວມຂອງພາກ ລັດ, ບໍລິສັດ ແລະ ປະຊາຊົນ ໃນທຸກບາດກ້າວຂອງການພັດທະນາໂຄງການ ລວມທັງສິດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕໍ່ກາກບອນປ່າໄມ້ ໃນພື້ນທີ່ໂຄງການ;

5. ຮັບປະກັນ ການນຳໃຊ້ປະໂຫຍດຈາກປ່າໄມ້ ໃນພື້ນທີ່ໂຄງການ ເພື່ອກິດຈະກຳອື່ນທີ່ບໍ່ເປັນການທຳລາຍປ່າໄມ້ ເຊັ່ນ ການທ່ອງທ່ຽວອະນຸລັກ ແລະ ຮູບແບບລົງທຶນອື່ນ ທີ່ບໍ່ກະທົບຕໍ່ການພັດທະນາສິນເຊື່ອກາກບອນປ່າໄມ້;

6. ສອດຄ່ອງກັບມາດຕະຖານດ້ານເຕັກນິກ ແລະ ພັນທະຂອງ ສປປ ລາວ ຕໍ່ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ກ່ຽວກັບວຽກງານກາກບອນປ່າໄມ້ ໃນ ສປປ ລາວ.

## ໝວດທີ 2
## ມາດຕະຖານ, ນະໂຍບາຍການປົກປ້ອງ, ກອງທຶນ ແລະ ຕະຫຼາດ ກ່ຽວກັບກາກບອນປ່າໄມ້ ໃນລະດັບສາກົນ

**ມາດຕາ 6 ມາດຕະຖານ**

ການຄ້າຂາຍ ກາກບອນປ່າໄມ້ ຕ້ອງປະຕິບັດຕາມ ມາດຕະຖານ ສາກົນ ທີ່ແທດເໝາະກັບສະພາບການຄຸ້ມຄອງປ່າໄມ້ ແລະ ສອດຄ່ອງ ກັບກົດໝາຍຂອງ ສປປ ລາວ ເປັນຕົ້ນ ມາດຕະຖານ ຂອງ UNFCCC ກຳນົດ, ມາດຕະຖານສຳລັບກາກບອນປ່າໄມ້ ແບບສະໝັກໃຈ ແລະ ລະບຽບຫຼັກການ ຂອງກອງທຶນກາກບອນປ່າໄມ້ ສາກົນ ທີ່ກຳນົດ ເປັນແຕ່ລະໄລຍະ.

**ມາດຕາ 7 ນະໂຍບາຍການປົກປ້ອງ ສັງຄົມ ແລະ ສິ່ງແວດລ້ອມ**

ຜູ້ລົງທຶນ ວຽກງານກາກບອນປ່າໄມ້ ຕ້ອງພັດທະນາແຜນງານປົກປ້ອງ ສັງຄົມ ແລະ ສິ່ງແວດລ້ອມ ດ້ວຍການ ສ້າງບົດລາຍງານປະເມີນຜົນກະທົບ ສັງຄົມ ແລະ ສິ່ງແວດລ້ອມ, ສ້າງແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ເພື່ອຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ໂດຍການມີສ່ວນຮ່ວມ ຂອງອົງການຈັດຕັ້ງ ລັດ ແລະ ປະຊາຊົນ; ຍົກສູງ ບົດບາດ ຍິງ ຊາຍ, ປະຊາຊົນບັນດາເຜົ່າ ແລະ ກົນໄກການຮ້ອງທຸກ ໃຫ້ໄດ້ຕາມເງື່ອນໄຂ ຂອງແຕ່ລະມາດຕະຖານສາກົນ ທີ່ກຳນົດເປັນແຕ່ລະໄລຍະ ຊຶ່ງແມ່ນຜູ້ຊື້ສາມາດຍອມຮັບໄດ້.

**ມາດຕາ 8 ກອງທຶນກາກບອນປ່າໄມ້ສາກົນ**

ກອງທຶນກາກບອນປ່າໄມ້ສາກົນ ສຳລັບການຈ່າຍຕອບແທນຕາມຜົນງານ ຂອງຜູ້ພັດທະນາໂຄງການກາກບອນປ່າໄມ້ ຊຶ່ງຈະເປັນໃນນາມ ລັດຖະບານ ຫຼື ອົງການຈັດຕັ້ງ ມີລະບຽບການສະເພາະ ແລະ ບໍ່ເປັນໄປຕາມກົນໄກຕະຫຼາດກາກບອນ, ກອງທຶນເຫຼົ່ານັ້ນມີທັງໄລຍະສັ້ນ ແລະ ໄລຍະຍາວ ເຊັ່ນ: ກອງທຶນຄູ່ຮ່ວມກາກບອນປ່າໄມ້ (Forest Carbon Partnership Facility), ກອງທຶນດິນຟ້າອາກາດສີຂຽວ (Green Climate Fund) ສຳລັບການຈ່າຍຕອບແທນຕາມຜົນງານ, ກອງທຶນປະຕິບັດການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຂອງທະນາຄານໂລກ (Scaling Climate Action by Lowering Emissions ''SCALE'');

ການເຂົ້າເຖິງ ກອງທຶນເຫຼົ່ານັ້ນ ຕ້ອງມີຫຼັກການສະເພາະ ສຳລັບການພັດທະນາໂຄງການ, ກຳນົດລາຄາສິນເຊື່ອກາກບອນປ່າໄມ້ລ່ວງໜ້າ ໂດຍບໍ່ໄດ້ອີງໃສ່ຫຼັກການຕະຫຼາດ, ມີຫຼັກການເຂັ້ມງວດ ສຳລັບການນຳໃຊ້ ແລະ ການແບ່ງປັນຜົນປະໂຫຍດທາງດ້ານການເງິນ.

**ມາດຕາ 9 ຕະຫຼາດກາກບອນປ່າໄມ້**

ກາກບອນປ່າໄມ້ ສາມາດຄ້າ ຂາຍ ຜ່ານກົນໄກ ຕະຫຼາດແບບບັງຄັບ ແລະ ຕະຫຼາດແບບສະໝັກໃຈ.

ຕະຫຼາດແບບບັງຄັບ ແມ່ນ ການຕົກລົງ ຄ້າຂາຍ ກາກບອນປ່າໄມ້ ລະຫວ່າງ ຜູ້ຊື້ ກັບຜູ້ຂາຍ ໂດຍຜ່ານຕະຫຼາດຄ້າຂາຍ ສິນເຊື່ອກາກບອນປ່າໄມ້ ຊຶ່ງການຄ້າຂາຍດັ່ງກ່າວ ຕ້ອງເປັນໄປຕາມເງື່ອນໄຂ, ລະບຽບການ ຂອງຕະຫຼາດສິນເຊື່ອກາກບອນປ່າໄມ້ ແລະ ພັນທະການຫຼຸດຜ່ອນທາດອາຍເຮືອນແກ້ວ. ປັດຈຸບັນທ່າແຮງການເຂົ້າເຖິງຕະຫຼາດແບບບັງຄັບ ຍັງຈຳກັດ ແລະ ຍັງບໍ່ທັນມີການກຳນົດລະອຽດ.

ຕະຫຼາດແບບສະໝັກໃຈ ແມ່ນ ການຕົກລົງຄ້າຂາຍ ສິນເຊື່ອກາກບອນ ກັນໂດຍກົງ ລະຫວ່າງ ຜູ້ຊື້ກັບຜູ້ຂາຍ ຕາມມາດຕະຖານ ການຫຼຸດຜ່ອນທາດອາຍເຮືອນແກ້ວຂອງສາກົນ ຊຶ່ງຕະຫຼາດດັ່ງກ່າວ ແມ່ນບໍ່ໄດ້ຜ່ານມາດຕະຖານ ຂອງ UNFCCC ກຳນົດ.

## ໝວດທີ 3
## ກິດຈະການ ແລະ ການລົງທຶນຮ່ວມມື ກາກບອນປ່າໄມ້

**ມາດຕາ 10 ກິດຈະການ ກາກບອນປ່າໄມ້**

ກິດຈະການ ກາກບອນປ່າໄມ້ ແມ່ນການລົງທຶນໃນການຮ່ວມມື ການພັດທະນາໂຄງການ ກາກບອນປ່າໄມ້ ໃນຮູບແບບຕ່າງໆ ເພື່ອສິນເຊື່ອກາກບອນປ່າໄມ້ ແລະ ຫຼຸດຜ່ອນທາດອາຍເຮືອນແກ້ວ ໃນຂະແໜງການປ່າໄມ້ ເພື່ອຜົນປະໂຫຍດ ທາງດ້ານເສດຖະກິດ ຫຼື ສິ່ງແວດລ້ອມ.

ກິດຈະການ ກາກບອນປ່າໄມ້ ຢູ່ ສປປ ລາວ ປະກອບດ້ວຍ:

1. ການຮ່ວມມື ລະຫວ່າງ ລັດຖະບານ ກັບ ຄູ່ຮ່ວມພັດທະນາ;
2. ການລົງທຶນກາກບອນປ່າໄມ້.

**ມາດຕາ 11 ການຮ່ວມມື ລະຫວ່າງ ລັດຖະບານ ກັບຄູ່ຮ່ວມພັດທະນາ**

ການຮ່ວມມື ລະຫວ່າງ ລັດຖະບານ ກັບ ຄູ່ຮ່ວມພັດທະນາ ປະກອບມີ ການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ຊຶ່ງທັງສອງປະເພດນີ້ ແມ່ນອີງໃສ່ເງື່ອນໄຂ ແລະ ຫຼັກການກອງທຶນກາກບອນສາກົນ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ການນຳໃຊ້ສິນເຊື່ອກາກບອນ ຈາກການຮ່ວມມື ລະຫວ່າງ ລັດຖະບານ ກັບ ຄູ່ຮ່ວມພັດທະນາ ບໍ່ເປັນໄປຕາມກົນໄກການຕະຫຼາດ ແຕ່ຂຶ້ນກັບສັນຍາ ທີ່ສອງຝ່າຍເຊັນຮ່ວມກັນ ແລະ ເປັນພື້ນຖານປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຂອງປະເທດຕົນເອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6.2 ຂອງ ສັນຍາ ປາຣີ.

ການຮ່ວມມື ລະຫວ່າງ ລັດຖະບານ ກັບ ຄູ່ຮ່ວມພັດທະນາ ອາດສ້າງບໍລິສັດຮ່ວມທຶນ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳຂອງກິດຈະການກາກບອນປ່າໄມ້ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 12 ການລົງທຶນກາກບອນປ່າໄມ້**

ການລົງທຶນກາກບອນປ່າໄມ້ ແມ່ນການລົງທຶນຂອງລັດ ໂດຍກົງ ແລະ ການລົງທຶນຮ່ວມ ລະຫວ່າງລັດຖະບານ ກັບ ເອກະຊົນ, ລັດຖະບານ ກັບ ອົງການຈັດຕັ້ງສາກົນ ຫຼື ລັດຖະບານ ກັບ ຊຸມຊົນ ຫຼື ຊຸມຊົນເອງ ເພື່ອສ້າງສິນເຊື່ອກາກບອນປ່າໄມ້ ຢູ່ ໃນ ແລະ ນອກ ສາມປະເພດປ່າ.

ການລົງທຶນກາກບອນປ່າໄມ້ ບໍ່ແມ່ນການຜູກຂາດສິດ ຂອງຜູ້ລົງທຶນຕໍ່ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ອື່ນ ຊຶ່ງຂະແໜງການປ່າໄມ້ ສາມາດນຳເອົາພື້ນທີ່ ຂອງໂຄງການເຂົ້າໃນກິດຈະການອື່ນທີ່ບໍ່ເປັນການທຳລາຍ ການສ້າງສິນເຊື່ອ ກາກບອນປ່າໄມ້ ເຊັ່ນ: ການທ່ອງທ່ຽວອະນຸລັກ ແລະ ຮູບແບບອື່ນໆ.

ສ່ວນການລົງທຶນຮ່ວມ ລະຫວ່າງ ລັດຖະບານ ແລະ ພາກສ່ວນອື່ນ ແມ່ນດຳເນີນໃນຮູບແບບເປັນຄູ່

ຮ່ວມງານ ແລະ ບໍ່ແມ່ນຮູບແບບການສຳປະທານທີ່ດິນ ຊຶ່ງແຕກຕ່າງກັບການລົງທຶນຂະແໜງການອື່ນ ທີ່ຕິດພັນກັບການນຳໃຊ້ທີ່ດິນ ເຊັ່ນ: ກະສິກຳ, ການຂຸດຄົ້ນບໍ່ແຮ່ ແລະ ການສ້າງເຂື່ອນໄຟຟ້າ.

**ມາດຕາ 13 ເງື່ອນໄຂຂອງຜູ້ລົງທຶນ**

ຜູ້ລົງທຶນ ທີ່ສາມາດສະເໜີ ການລົງທຶນກາກບອນປ່າໄມ້ ຕ້ອງຜ່ານບັນດາເງື່ອນໄຂດ້ານການລົງທຶນທົ່ວໄປ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ກ່ຽວຂ້ອງ ແລະ ມີເງື່ອນໄຂການລົງທຶນສະເພາະຂອງກາກບອນປ່າໄມ້ ດັ່ງນີ້:

1. ເປັນບໍລິສັດ ທີ່ໄດ້ຈົດທະບຽນວິສະຫະກິດ ຢ່າງຖືກຕ້ອງ;
2. ມີໃບທະບຽນດຳເນີນທຸລະກິດ ສຳລັບການຄ້າຂາຍກາກບອນປ່າໄມ້ ຈາກກະຊວງກະສິກຳ ແລະ ປ່າໄມ້;
3. ສຳລັບບໍລິສັດທີ່ປຶກສາ ຕ້ອງມີໃບທະບຽນດຳເນີນທຸລະກິດທີ່ປຶກສາ ຢູ່ ສປປ ລາວ;
4. ຜູ້ສະເໜີລົງທຶນ ຕ້ອງມີປະສົບການ ຫຼື ໄດ້ເຄື່ອນໄຫວຕິດພັນກັບຊັບພະຍາກອນປ່າໄມ້, ຊີວະນາໆພັນ ແລະ ເຂົ້າໃຈການເຮັດວຽກກັບຊຸມຊົນ ດ້ານການລົງທຶນກາກບອນປ່າໄມ້;
5. ຜູ້ລົງທຶນ ຕ້ອງລົງທຶນລ່ວງໜ້າໃສ່ວຽກງານຄຸ້ມຄອງປ່າໄມ້;
6. ຜູ້ລົງທຶນ ຕ້ອງມີຄວາມພ້ອມທາງດ້ານເຕັກນິກວິຊາການ ແລະ ສາມາດເຂົ້າເຖິງຕະຫຼາດ ຄ້າຂາຍກາກບອນປ່າໄມ້ ໄດ້ເປີດບັນຊີສະເພາະ ຢູ່ທະນາຄານທຸລະກິດໃດໜຶ່ງ ໃນ ສປປ ລາວ ຕາມກົດໝາຍກຳນົດ;
7. ຜູ້ລົງທຶນ ຕ້ອງມີຄວາມໝັ້ນຄົງທາງດ້ານການເງິນ ແລະ ມີທຶນເໝາະສົມໃນການລົງທຶນໃສ່ວຽກງານກາກບອນປ່າໄມ້ ແລະ ສາມາດປະກອບສ່ວນເງິນທຶນໃນການຄຸ້ມຄອງປ່າໄມ້ ຕາມລະບຽບການ;
8. ສຳລັບບໍລິສັດທີ່ຈະລົງທຶນໃນການປູກໄມ້ ຕ້ອງມີໃບຢັ້ງຢືນການນຳໃຊ້ທີ່ດິນ (ໃບຕາດິນ) ໄລຍະຍາວທີ່ເປັນຂອງຕົນເອງ, ສຳລັບໂຄງການ ແລະ/ຫຼື ສັນຍາການເຊົ່າສຳປະທານທີ່ດິນປ່າໄມ້ຂອງບ້ານ ທີ່ເຊັນຮັບຮູ້ໂດຍກົມປ່າໄມ້ ຫຼື ກະຊວງກະສິກຳ ແລະ ປ່າໄມ້;
9. ພື້ນທີ່ ທີ່ຂໍອະນຸຍາດລົງທຶນ ຕ້ອງບໍ່ທັບຊ້ອນກັບພື້ນທີ່ຂອງໂຄງການອື່ນໆ ລວມທັງໂຄງການລະຫວ່າງ ລັດຖະບານ ຕໍ່ກັບລັດຖະບານ ຖ້າຫາກມີການຊໍ້າຊ້ອນກັບໂຄງການລະດັບຊາດ ຫຼື ລະດັບທ້ອງຖິ່ນທີ່ມີຮູບແບບການຈ່າຍຕາມຜົນງານ ພາຍໃຕ້ກົນໄກ ຂອງອົງການຈັດຕັ້ງສາກົນ ຫຼື ກົນໄກລິເລີ່ມສາກົນ, ທຸກໆລະບຽບຫຼັກການຂອງກົນໄກດັ່ງກ່າວຕ້ອງໄດ້ຖືກປະຕິບັດຢ່າງເຄັ່ງຄັດ;
10. ພື້ນທີ່ ທີ່ຂໍອະນຸຍາດລົງທຶນ ຕ້ອງເປັນພື້ນທີ່ປ່າໄມ້ ຊຶ່ງກົມປ່າໄມ້ ຫຼື ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອະນຸມັດໃຫ້ດຳເນີນວຽກງານກາກບອນປ່າໄມ້.

**ມາດຕາ 14 ການປະກອບເອກະສານ**

ເອກະສານປະກອບການພັດທະນາໂຄງການ ມີ ດັ່ງນີ້:

1. ໜັງສືສະເໜີ ຂໍການລົງທຶນ ຍື່ນຫາ ກະຊວງກະສິກຳ ແລະ ປ່າໄມ້;
2. ບົດສະເໜີໂຄງການ (Concept Note);
3. ໃບທະບຽນວິສາຫະກິດ ກ່ຽວຂ້ອງກັບ ການລົງທຶນກາກບອນປ່າໄມ້;
4. ປະຫວັດການດຳເນີນທຸລະກິດ;
5. ບົດລາຍງານສະຖານະທາງການເງິນ ຂອງບໍລິສັດ;
6. ເອກະສານອື່ນໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ.

**ມາດຕາ 15 ຂັ້ນຕອນການສະເໜີ ລົງທຶນຮ່ວມມື ກາກບອນປ່າໄມ້**

ຜູ້ລົງທຶນ ທີ່ມີຈຸດປະສົງລົງທຶນກິດຈະການ ກາກບອນປ່າໄມ້ ຕ້ອງສະເໜີຕາມຂັ້ນຕອນ ດັ່ງນີ້:

1. ຍື່ນ ເອກະສານພັດທະນາໂຄງການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງ ສະບັບນີ້ ຕໍ່ ກະຊວງກະສິກຳ ແລະ ປ່າໄມ້ ໂດຍຜ່ານ ກົມປ່າໄມ້;

2. ກົມປ່າໄມ້ ຄົ້ນຄວ້າ ກວດກາ ເນື້ອໃນເອກະສານ ສະເໜີການລົງທຶນ, ກວດກາພື້ນທີ່ເປົ້າໝາຍ ເຮັດໜັງສືລາຍງານ ເພື່ອຂໍອະນຸມັດເຊັນບົດບັນທຶກຄວາມເຂົ້າໃຈ ຕໍ່ ກະຊວງກະສິກຳ ແລະ ປ່າໄມ້;

3. ຫຼັງຈາກເຊັນ ບົດບັນທຶກຄວາມເຂົ້າໃຈ (MOU) ແລ້ວ ບໍລິສັດ ຕ້ອງຈ່າຍເງິນມັດຈຳ ພາຍໃນ ສິບຫ້າ (15) ວັນ ລັດຖະການ ໃຫ້ ກົມປ່າໄມ້ ຈຳນວນ ສິບຫ້າພັນ (15,000) ໂດລາສະຫະລັດ ສຳລັບ ໂຄງການທີ່ມີເນື້ອທີ່ບໍ່ເກີນ ສາມແສນ (300,000) ເຮັກຕາ ແລະ ຈຳນວນ ສາມສິບພັນ (30,000) ໂດລາສະຫະລັດ ສຳລັບໂຄງການ ທີ່ມີເນື້ອທີ່ຫຼາຍກວ່າ ສາມແສນ (300,000) ເຮັກຕາ;

4. ຜູ້ລົງທຶນ ດຳເນີນການສຶກສາຄວາມເປັນໄປໄດ້ ພາຍໃນ ໜຶ່ງ (1) ປີ ຫຼື ສິບສອງ (12) ເດືອນ ນັບແຕ່ວັນທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ອີກ ໜຶ່ງ (1) ປີ ຖ້າມີເຫດຜົນພຽງພໍ. ການສຶກສາຄວາມເປັນໄປໄດ້ ຕ້ອງຮັບປະກັນການມີສ່ວນຮ່ວມ ຂອງຂະແໜງການປ່າໄມ້ ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ບັນດາຜູ້ມີສ່ວນຮ່ວມອື່ນ ໃນເຂດພື້ນທີ່ໂຄງການ. ການດຳເນີນການສຶກສາຄວາມເປັນໄປໄດ້ ໃຫ້ປະຕິບັດຕາມ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;

5. ກົມປ່າໄມ້ ຄົ້ນຄວ້າ ແລະ ກວດກາ ເນື້ອໃນບົດລາຍງານການສຶກສາຄວາມເປັນໄປໄດ້ ເພື່ອສະເໜີຫາ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອອກໃບຢັ້ງຢືນຮັບຮອງ ຫຼື ໃຫ້ສຶກສາຄືນໃໝ່ ຫຼື ແຈ້ງຍົກເລີກ (MOU) ພາຍໃນກຳນົດເວລາ ສອງ (2) ເດືອນ;

6. ພາຍຫຼັງ ກົມປ່າໄມ້ ອອກໃບຢັ້ງຢືນຮັບຮອງເອົາບົດລາຍງານການສຶກສາຄວາມເປັນໄປໄດ້ແລ້ວ ບໍລິສັດ ສາມາດສະເໜີເຈລະຈາສັນຍາຮ່ວມມື (MOA); ພາຍຫຼັງສຳເລັດ ການເຈລະຈາ ຮ່າງສັນຍາຮ່ວມມື (MOA), ກະຊວງກະສິກຳ ແລະ ປ່າໄມ້ ສະເໜີ ລັດຖະບານ ເພື່ອພິຈາລະນາ ການເຊັນສັນຍາຮ່ວມມື (MOA) ຢ່າງໜ້ອຍ ຫົກ (6) ເດືອນ;

7. ກໍລະນີ ຜູ້ລົງທຶນ ບໍ່ສາມາດຈັດຕັ້ງປະຕິບັດຕາມ ສັນຍາຮ່ວມມື (MOA) ພາຍໃນ ໜຶ່ງຮ້ອຍແປດສິບ (180) ວັນ ລັດຖະການ ນັບຈາກມື້ທີ່ທັງສອງຝ່າຍໄດ້ລົງນາມຮ່ວມກັນເປັນຕົ້ນໄປ, ກະຊວງກະສິກຳ ແລະ ປ່າໄມ້ ສະເໜີ ລັດຖະບານ ພິຈາລະນາ ຍົກເລີກ ສັນຍາຮ່ວມມື (MOA);

8. ລັດຖະບານ ມີສິດອະນຸຍາດ ໂຄງການອື່ນໆ ທີ່ເປັນການສົ່ງເສີມການອະນຸລັກ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເຊັ່ນ ການທ່ອງທ່ຽວແບບອະນຸລັກ ແລະ ຮູບແບບອື່ນໆ ທີ່ບໍ່ກະທົບຕໍ່ການພັດທະນາສິນເຊື່ອກາກບອນປ່າໄມ້.

### ມາດຕາ 16 ການສຶກສາຄວາມເປັນໄປໄດ້

ຜູ້ລົງທຶນ ຫຼື ບໍລິສັດທີ່ປຶກສາ ຕ້ອງສົມທົບກັບຂະແໜງການປ່າໄມ້ ດຳເນີນການສຶກສາຄວາມເປັນໄປໄດ້ໃນການເກັບກຳ ແລະ ວິເຄາະຂໍ້ມູນເບື້ອງຕົ້ນ ກ່ຽວກັບສະພາບປ່າໄມ້ ໂດຍການນຳໃຊ້ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ, ການສຳຫຼວດຕົວຈິງ, ສະພາບເສດຖະກິດ-ສັງຄົມ ຢູ່ໃນພື້ນທີ່ໂຄງການ ແລະ ເຂດໃກ້ຄຽງ ລວມທັງການສຶກສາທາງດ້ານການເງິນ, ການປະເມີນຄວາມສ່ຽງ ຂອງການຈັດຕັ້ງປະຕິບັດໂຄງການ, ນິຕິກຳ ແລະ ສິ່ງແວດລ້ອມ.

## ໝວດທີ 4
## ການຂຶ້ນທະບຽນ ແລະ ການດຳເນີນໂຄງການ ກາກບອນປ່າໄມ້

### ມາດຕາ 17 ການຂຶ້ນທະບຽນໂຄງການ ກາກບອນປ່າໄມ້

ການຂຶ້ນທະບຽນໂຄງການ ກາກບອນປ່າໄມ້ ແມ່ນ ການອອກໃບຢັ້ງຢືນໂຄງການກາກບອນປ່າໄມ້ ຢ່າງຖືກຕ້ອງຕາມກົດໝາຍ ໃຫ້ແກ່ຜູ້ທີ່ເປັນເຈົ້າຂອງກິດຈະການ ກາກບອນປ່າໄມ້ ເພື່ອພັດທະນາເປັນໂຄງການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ຊຸດໂຊມ ດ້ວຍການຮ່ວມມື ສອງຝ່າຍ ຫຼື ຫຼາຍຝ່າຍ ກ່ຽວກັບກາກບອນປ່າໄມ້ ແລະ ການຄ້າຂາຍກາກບອນປ່າໄມ້ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ກົມປ່າໄມ້ ເປັນຜູ້ພິຈາລະນາ ຂຶ້ນທະບຽນໂຄງການກາກບອນປ່າໄມ້ ຕາມການສະເໜີຂອງເຈົ້າຂອງໂຄງການກາກບອນປ່າໄມ້ ບົນພື້ນຖານການຢັ້ງຢືນຈາກ ໜ່ວຍງານຮັບຮອງ ແລະ ຢັ້ງຢືນກາກບອນເອກະລາດ ຕາມມາດຕະຖານສາກົນ.

**ມາດຕາ 18 ການປະກອບເອກະສານ ຂໍຂຶ້ນທະບຽນໂຄງການກາກບອນປ່າໄມ້**

ເອກະສານປະກອບ ຂໍຂຶ້ນທະບຽນໂຄງການກາກບອນປ່າໄມ້ ມີດັ່ງນີ້:

1. ໃບຄໍາຮ້ອງຂໍຂຶ້ນທະບຽນ ໂຄງການບອນປ່າໄມ້;
2. ເອກະສານຢັ້ງຢືນ ຈຸດທີ່ຕັ້ງ, ເຂດແດນ ແລະ ພື້ນທີ່ຂອງໂຄງການ ຂອງກົມປ່າໄມ້;
3. ໃບທະບຽນວິສາຫະກິດ;
4. ໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້;
5. ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ;
6. ແຜນງານປົກປ້ອງ ສັງຄົມ ແລະ ສິ່ງແວດລ້ອມ;
7. ບົດລາຍງານສະຖານະທາງການເງິນ ຂອງບໍລິສັດ;
8. ເອກະສານອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 19 ການພິຈາລະນາ ຂຶ້ນທະບຽນໂຄງການ ກາກບອນປ່າໄມ້**

ກົມປ່າໄມ້ ພິຈາລະນາ ການຂຶ້ນທະບຽນໂຄງການກາກບອນປ່າໄມ້ ດັ່ງນີ້:

1. ກວດກາຄໍາຮ້ອງ ແລະ ເອກະສານປະກອບ ຂໍຂຶ້ນທະບຽນໂຄງການກາກບອນປ່າໄມ້, ກໍລະນີຫາກເຫັນວ່າ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຕໍ່ຜູ້ຮ້ອງຂໍຊາບເປັນລາຍລັກອັກສອນ ພ້ອມທັງໃຫ້ເຫດຜົນ ພາຍໃນກໍານົດເວລາ ຫ້າ (5) ວັນ ນັບແຕ່ວັນຮັບຄໍາຮ້ອງເປັນຕົ້ນໄປ;

2. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດໍາເນີນການກວດກາພື້ນທີ່ໂຄງການ, ຈັດກອງປະຊຸມປຶກສາຫາລື ແລະ ອອກໃບຢັ້ງຢືນໂຄງການກາກບອນປ່າໄມ້ ພາຍໃນກໍານົດ ສາມສິບ (30) ວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ໃນກໍລະນີຫາກບໍ່ສາມາດອອກໃບຢັ້ງຢືນໂຄງການກາກບອນປ່າໄມ້ ພາຍໃນກໍານົດເວລາດັ່ງກ່າວໄດ້ ຕ້ອງແຈ້ງຕໍ່ຜູ້ຮ້ອງຂໍຊາບເປັນລາຍລັກອັກສອນ ພ້ອມໃຫ້ເຫດຜົນ.

**ມາດຕາ 20 ການດໍາເນີນໂຄງການ ກາກບອນປ່າໄມ້**

ການດໍາເນີນໂຄງການກາກບອນປ່າໄມ້ ຕ້ອງດໍາເນີນການຕາມເງື່ອນໄຂ ດັ່ງນີ້:

1. ເຈົ້າຂອງໂຄງການ ກໍານົດຂັ້ນຕອນ ແລະ ສ້າງແຜນດໍາເນີນກິດຈະກໍາຂອງໂຄງການ ເປັນຕົ້ນການປະເມີນ ການດູດຊັບກາກບອນປ່າໄມ້, ການຕິດຕາມກວດກາຂອງພາກລັດ, ການຢັ້ງຢືນ ແລະ ການຄ້າຂາຍ, ການແບ່ງລາຍຮັບ ແລະ ການຄຸ້ມຄອງຜົນປະໂຫຍດ;

2. ເຈົ້າຂອງໂຄງການ ສ້າງເສັ້ນທຽບຖານວັດແທກປະລິມານ ກາກບອນປ່າໄມ້ ໃນພື້ນທີ່ໂຄງການເພື່ອສະແດງໃຫ້ເຫັນຜົນງານໃນການດູດຊັບກາກບອນປ່າໄມ້ ຕະຫຼອດໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ. ການສ້າງເສັ້ນທຽບຖານນີ້ ຕ້ອງຮັບປະກັນການມີສ່ວນຮ່ວມ ແລະ ສອດຄ່ອງກັບເສັ້ນທຽບຖານແຫ່ງຊາດ ຂອງອົງການຄຸ້ມຄອງກາກບອນປ່າໄມ້ ແລະ ປະຕິບັດຕາມມາດຕະຖານສາກົນ ວາງອອກ;

3. ເຈົ້າຂອງໂຄງການ ວາງແຜນກິດຈະກໍາ, ແຜນງົບປະມານ, ແຜນບຸກຄະລາກອນ, ວັດຖຸປະກອນ, ພາຫະນະ ແລະ ແຜນງານອື່ນໆ ໂດຍການມີສ່ວນຮ່ວມຂອງປະຊາຊົນ ເພື່ອໃຫ້ບັນລຸຕາມຈຸດປະສົງຂອງໂຄງການ ແລະ ລາຍງານ ໃຫ້ກົມປ່າໄມ້ ພາຍໃນ ເກົ້າສິບ (90) ວັນ ພາຍຫຼັງລົງນາມ ສັນຍາຮ່ວມມື (MOA);

4. ເຈົ້າຂອງໂຄງການ ຕ້ອງຊອກຫາຕະຫຼາດທີ່ເໝາະສົມ ເພື່ອຄ້າຂາຍສິນເຊື່ອກາກບອນປ່າໄມ້ ຫຼື ການຄ້າຂາຍ ສິນເຊື່ອກາກບອນປ່າໄມ້;

5. ກົມປ່າໄມ້ ສົມທົບກັບ ກອງຄຸ້ມຄອງປ່າໄມ້, ຂະແໜງປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການດໍາເນີນວຽກງານສໍາຫຼວດ ເຂດແດນທີ່ດິນປ່າໄມ້, ເຂດທີ່ດິນປ່າຊຸດໂຊມ ແລະ ທີ່ດິນປອກໂຫຼ້ນ, ເຂດປູກ

ໄມ້ ເຂດຄຸ້ມຄອງນຳໃຊ້, ເຂດຫວງຫ້າມເດັດຂາດ, ເຂດກັນຊົນ, ເຂດອະນຸລັກຊີວະນາໆພັນທີ່ມີຄຸນຄ່າສູງ ໃຫ້ ຊັດເຈນ ແລະ ແທດເໝາະກັບຄວາມເປັນຈິງ ເພື່ອໃຫ້ບັນລຸຕາມ ຈຸດປະສົງຂອງໂຄງການ;

6. ກົມປ່າໄມ້ ສົມທົບກັບ ກອງຄຸ້ມຄອງປ່າໄມ້, ຂະແໜງປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນ ລົງຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ວຽກງານຂອງເຈົ້າຂອງໂຄງການ, ລວມທັງ ຈັດກອງປະຊຸມ ປຶກສາຫາລື ທາງດ້ານວິຊາການ ແຕ່ລະໄລຍະ;

7. ກົມປ່າໄມ້ ສັງລວມ, ເກັບກຳ ແລະ ວິເຄາະ ຂໍ້ມູນທີ່ຕິດພັນກັບການພັດທະນາ ແລະ ຈັດຕັ້ງ ປະຕິບັດ ໂຄງການກາກບອນປ່າໄມ້ ເພື່ອເປົ້າໝາຍ ໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກ ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ (REDD+), ສິນເຊື່ອກາກບອນປ່າໄມ້ ທີ່ຜະລິດໄດ້ຈາກ ໂຄການ ຈະຕ້ອງໄດ້ນຳໃຊ້ເຂົ້າໃນແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າ ອາກາດ (NDC) ຕາມຄວາມເໝາະສົມ.

### ມາດຕາ 21 ການຄ້າຂາຍກາກບອນປ່າໄມ້

ການຄ້າຂາຍກາກບອນປ່າໄມ້ ແມ່ນການຕົກລົງກັນ ລະຫວ່າງ ຜູ້ຊື້ ທີ່ເປັນ ນິຕິບຸກຄົນ ຫຼື ລັດຖະ ບານ ທັງພາຍໃນ ແລະ ຕ່າງປະເທດ ກັບ ຜູ້ຂາຍ ທີ່ເປັນເຈົ້າຂອງໂຄງການ ກາກບອນປ່າໄມ້ ຕາມຫົວໜ່ວຍ ໂຕນກາກໂບນິກທຽບເທົ່າ ($tCO_{2e}$) ເພື່ອທົດແທນການປ່ອຍທາດອາຍເຮືອນແກ້ວ ທີ່ຜູ້ຊື້ໄດ້ປ່ອຍສູງເກີນ ອັດຕາ ການອະນຸຍາດປ່ອຍ ຕາມທີ່ກຳນົດໄວ້ໃນສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ. ກາກບອນ ປ່າໄມ້ ທີ່ໄດ້ຂາຍໄປແລ້ວເປັນກຳມະສິດຂອງຜູ້ຊື້.

ການຄ້າຂາຍ ກາກບອນປ່າໄມ້ ອາດດຳເນີນ ໂດຍຮູບການທີ່ຜູ້ລົງທຶນໂຄງການ ຊື້ ສິນເຊື່ອກາກບອນ ໂດຍກົງ ຈາກລັດຖະບານ ດ້ວຍວິທີການຫັກເງິນລົງທຶນລ່ວງໜ້າຈາກໂຄງການລົງທຶນ. ພາຍຫຼັງດຳເນີນການ ຄ້າຂາຍ ສຳເລັດ ຜູ້ລົງທຶນໂຄງການ ຈ່າຍພັນທະເປັນເປີເຊັນ ຂອງມູນຄ່າກາກບອນປ່າໄມ້ທັງໝົດ ທີ່ໂຄງການ ຜະລິດໄດ້ ໃຫ້ລັດຖະບານ ແລະ ພັນທະອື່ນ.

ສຳລັບ ການຄ້າຂາຍ ກາກບອນປ່າໄມ້ ທີ່ເກີດຂຶ້ນຈາກປ່າທຳມະຊາດ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ສະເໜີ ລັດຖະບານ ພິຈາລະນາ ອະນຸມັດການຄ້າຂາຍ. ສ່ວນກາກບອນປ່າໄມ້ ທີ່ເກີດຈາກສວນປູກ/ປ່າ ປູກ ເຈົ້າຂອງໂຄງການສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດການຄ້າຂາຍ.

## ໝວດທີ 5
## ການຄຸ້ມຄອງລາຍຮັບ, ຜົນປະໂຫຍດ ແລະ ການມີສ່ວນຮ່ວມ

### ມາດຕາ 22 ລາຍຮັບຈາກກິດຈະການ ກາກບອນປ່າໄມ້

ລາຍຮັບຈາກກິດຈະການກາກບອນປ່າໄມ້ ແມ່ນ ລາຍຮັບທັງໝົດ ທີ່ເປັນເງິນຈາກການຄ້າຂາຍ ສິນ ເຊື່ອກາກບອນປ່າໄມ້ ໃນພື້ນທີ່ໂຄງການ ພາຍຫຼັງທີ່ໄດ້ຫັກລົບ ອາກອນລາຍໄດ້, ເສຍຄ່າທຳນຽມ ແລະ ຄ່າ ບໍລິການ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງ.

### ມາດຕາ 23 ຜົນປະໂຫຍດ ຈາກກິດຈະການກາກບອນປ່າໄມ້

ຜົນປະໂຫຍດຈາກກິດຈະການກາກບອນປ່າໄມ້ ປະກອບດ້ວຍ ຜົນປະໂຫຍດທາງກົງ ແລະ ຜົນ ປະໂຫຍດທາງອ້ອມ.

1. ຜົນປະໂຫຍດທາງກົງ ແມ່ນລາຍໄດ້ຈາກການຄ້າຂາຍ ສິນເຊື່ອກາກບອນປ່າໄມ້ ແລະ ຜົນ ປະໂຫຍດທີ່ເປັນກາກບອນປ່າໄມ້;

2. ຜົນປະໂຫຍດທາງອ້ອມ ແມ່ນຜົນປະໂຫຍດທີ່ບໍ່ເປັນເງິນ ແລະ ຜົນປະໂຫຍດທີ່ບໍ່ແມ່ນກາກ ບອນປ່າໄມ້ ເຊັ່ນ ການເພີ່ມຂຶ້ນ ຂອງເນື້ອທີ່ປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ. ຜົນປະໂຫຍດ ທາງອ້ອມ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດ ເປັນຕົວແທນໃນການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນທົ່ວປະເທດ.

**ມາດຕາ 24 ການແບ່ງປັນຜົນປະໂຫຍດທາງກົງ ຈາກກິດຈະການກາກບອນປ່າໄມ້**

ການແບ່ງປັນຜົນປະໂຫຍດທາງກົງ ຈາກກິດຈະການກາກບອນປ່າໄມ້ ແມ່ນ ການແບ່ງປັນ ຜົນປະໂຫຍດ ທີ່ເປັນລາຍຮັບຈາກການຄ້າຂາຍ ສິນເຊື່ອກາກບອນປ່າໄມ້ ແລະ ຜົນປະໂຫຍດທີ່ເປັນກາກບອນປ່າໄມ້ ຊຶ່ງໄດ້ຈາກການແບ່ງປັນ ລະຫວ່າງ ລັດຖະບານ ແລະ ຜູ້ລົງທຶນ ຫຼື ຄູ່ຮ່ວມມື.

ການແບ່ງປັນຜົນປະໂຫຍດທາງກົງໃຫ້ປະຕິບັດ ດັ່ງນີ້:

1. ຜົນປະໂຫຍດທີ່ເປັນເງິນ ຫຼື ການແບ່ງປັນສິນເຊື່ອກາກບອນ ທີ່ດຳເນີນຢູ່ພື້ນທີ່ປ່າໄມ້ທຳມະຊາດ ຫຼື ປູກໄມ້ປະສົມປະສານ ໃນພື້ນທີ່ ສາມ ປະເພດປ່າ ໃຫ້ແບ່ງປັນ ລະຫວ່າງ ລັດຖະບານ ແລະ ຜູ້ລົງທຶນໂຄງການ ຫຼື ຜູ້ເຂົ້າຮ່ວມອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ ຫຼື ສັນຍາຮ່ວມມື, ລັດຖະບານຈັດສັນຜົນປະໂຫຍດທີ່ເປັນເງິນ ໃຫ້ແກ່ຂະແໜງການປ່າໄມ້ ຂັ້ນສູນກາງ, ຂັ້ນທ້ອງຖິ່ນ, ຊຸມຊົນ ແລະ ປະຊາຊົນໃນພື້ນທີ່ໂຄງການ ແລະ ເຂດໃກ້ຄຽງ ຕາມຄວາມເໝາະສົມ ຫຼື ກົນໄກສະເພາະ;

2. ຜົນປະໂຫຍດທີ່ເປັນເງິນ ຫຼື ການແບ່ງປັນສິນເຊື່ອກາກບອນ ທີ່ດຳເນີນຢູ່ ປ່າປູກ ໃຫ້ແບ່ງປັນລະຫວ່າງ ເຈົ້າຂອງປ່າປູກ ແລະ ພາກລັດ ຫຼື ຜູ້ເຂົ້າຮ່ວມອື່ນ ຕາມກົດໝາຍ, ລະບຽບການ ຫຼື ສັນຍາຮ່ວມມື ການແບ່ງປັນດັ່ງກ່າວ ໃຫ້ລະບຸແຈ້ງໃນບົດວິພາກເສດຖະກິດ-ເຕັກນິກ ໃນເວລາຂຶ້ນທະບຽນໂຄງການຄ້າຂາຍສິນເຊື່ອກາກບອນປ່າໄມ້ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

3. ລາຍຮັບທີ່ເປັນເງິນ ທີ່ໄດ້ຈາກການຂາຍກາກບອນປ່າໄມ້ ພາຍຫຼັງໄດ້ແບ່ງປັນກັບຄູ່ສັນຍາ/ຄູ່ຮ່ວມງານແລ້ວ ຕ້ອງຈັດສັນໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳໃຊ້ເຂົ້າໃນການບໍລິຫານ ແລະ ດຳເນີນກິດຈະກຳການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ຕາມລະບຽບການ.

**ມາດຕາ 25 ການມີສ່ວນຮ່ວມ**

ຊຸມຊົນ ທີ່ດຳລົງຊີວິດຢູ່ເຂດພື້ນທີ່ເປົ້າໝາຍ ແລະ ເຂດໃກ້ຄຽງກັບການດຳເນີນກິດຈະກຳ ວຽກງານກາກບອນປ່າໄມ້ ມີສ່ວນຮ່ວມໃນວຽກງານກາກບອນປ່າໄມ້ ດັ່ງນີ້:

1. ເຂົ້າຮ່ວມໃນການສ້າງບົດວິພາກເສດຖະກິດ-ເຕັກນິກ ແລະ ສຶກສາຄວາມເປັນໄປໄດ້;

2. ແຈ້ງສິດ ກ່ຽວກັບປ່າໄມ້ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃນຊຸມຊົນຂອງຕົນເອງ ຕໍ່ ຜູ້ລົງທຶນ ຫຼື ອົງການຄຸ້ມຄອງວຽກງານກາກບອນປ່າໄມ້;

3. ເຂົ້າຮ່ວມໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກາກບອນປ່າໄມ້;

4. ໄດ້ຮັບການແບ່ງປັນຜົນປະໂຫຍດໂດຍທາງກົງ ແລະ ທາງອ້ອມ;

5. ຮັບປະກັນສິດຂອງຊຸມຊົນ ຈາກວຽກງານກາກບອນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 125 ແລະ ມາດຕາ 126 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ມາດຕາ 44, ມາດຕາ 130 ຂອງກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

6. ສະເໜີ ຫາ ຜູ້ລົງທຶນ ຫຼື ອົງການຄຸ້ມຄອງວຽກງານກາກບອນປ່າໄມ້ ກ່ຽວກັບບັນຫາ ຫຼື ຂໍ້ຂັດແຍ່ງ ທາງດ້ານສິດ ແລະ ຜົນປະໂຫຍດ ທີ່ເກີດຂຶ້ນຈາກການພັດທະນາໂຄງການ;

7. ເຂົ້າຮ່ວມບັນດາໜ້າວຽກ ຫຼື ກິດຈະກຳອື່ນ ຕາມການເຊີນຂອງຜູ້ລົງທຶນ ຫຼື ອົງການຄຸ້ມຄອງວຽກງານ ກາກບອນປ່າໄມ້.

**ມາດຕາ 26 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການໂຄສະນາເຜີຍແຜ່ ໃຫ້ສັງຄົມເຂົ້າໃຈ ແລະ ເຫັນໄດ້ຄວາມໝາຍ ແລະ ຄວາມສຳຄັນ ຂອງກາກບອນປ່າໄມ້ ໂດຍຜ່ານສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ ຊຸກຍູ້ ແລະ ສົ່ງເສີມການສ້າງກິດຈະກຳຕ່າງໆ ກ່ຽວກັບກາກບອນປ່າໄມ້ ດ້ວຍການເປັນເຈົ້າການຂອງຂະແໜງການກະສິກຳ ແລະ ປ່າໄມ້, ອົງການປົກຄອງທ້ອງຖິ່ນ ແລະ ການເຂົ້າຮ່ວມຂອງທຸກພາກສ່ວນໃນສັງຄົມ ໃຫ້ທົ່ວເຖິງໃນຂອບເຂດທົ່ວປະເທດ.

**ມາດຕາ 27 ຖານຂໍ້ມູນຂ່າວສານສິນເຊື່ອກາກບອນປ່າໄມ້**

ຂໍ້ມູນ ຂ່າວສານສິນເຊື່ອກາກບອນປ່າໄມ້ ແມ່ນ ເອກະສານ ແລະ ຂໍ້ມູນອື່ນ ກ່ຽວກັບ ກາກບອນປ່າໄມ້ ໄດ້ເກັບຮັກສາໄວ້ໃນຖານຂໍ້ມູນຂອງ ກົມປ່າໄມ້ ດ້ວຍຮູບແບບເອເລັກໂຕຣນິກ ໃນການຄຸ້ມຄອງ ແລະ ບໍລິຫານວຽກງານ ກາກບອນປ່າໄມ້ ຊຶ່ງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນໍາໃຊ້ຂໍ້ມູນຂ່າວສານກາກບອນປ່າໄມ້ ໂດຍການພິຈາລະນາ ຂອງ ກົມປ່າໄມ້.

**ມາດຕາ 28 ການນໍາໃຊ້ກາກບອນປ່າໄມ້**

ກາກບອນປ່າໄມ້ ທີ່ເກັບກັກ ຫຼື ສະສົມ ຈາກການຈັດຕັ້ງປະຕິບັດກິດຈະການກາກບອນປ່າໄມ້ ໃນທຸກພື້ນທີ່ຂອງໂຄງການ ສາມາດນໍາໃຊ້ເປັນກາກບອນປ່າໄມ້ຂອງພາກລັດ ຫຼື ຜູ້ລົງທຶນໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນ ເພື່ອເປັນພື້ນຖານໃນການຄິດໄລ່ ຄ້າຂາຍ ແລະ ແບ່ງປັນຜົນປະໂຫຍດ.

ກາກບອນປ່າໄມ້ ທີ່ເກັບກັກ ຫຼື ສະສົມໄດ້ຈາກກິດຈະການກາກບອນປ່າໄມ້ ຕາມບຸລິມະສິດ ດັ່ງນີ້:

1. ນໍາໃຊ້ເຂົ້າໃນແຜນງານແຫ່ງຊາດ ກ່ຽວກັບ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC);

2. ນໍາໃຊ້ ເພື່ອ ຄ້າຂາຍ ໃນຕະຫຼາດພາຍໃນ ແລະ ພາກພື້ນ ຕາມມາດຕະຖານ ແລະ ກົນໄກຕະຫຼາດກາກບອນປ່າໄມ້ ສາກົນ ທີ່ ລັດຖະບານແຫ່ງ ສປປ ລາວ ຮັບຮອງ ໃນແຕ່ລະໄລຍະ ສໍາລັບກິດຈະການລົງທຶນວຽກງານກາກບອນປ່າໄມ້;

3. ແບ່ງປັນລະຫວ່າງຜູ້ເຂົ້າຮ່ວມ ຕາມທີ່ກໍານົດໄວ້ໃນ ມາດຕາ 24 ຂອງ ຂໍ້ຕົກລົງສະບັບນີ້.

## ໝວດທີ 6
## ສິດ ແລະ ພັນທະຂອງຜູ້ລົງທຶນກາກບອນປ່າໄມ້

**ມາດຕາ 29 ສິດຂອງຜູ້ລົງທຶນ**

ຜູ້ລົງທຶນກາກບອນປ່າໄມ້ ມີ ສິດ ດັ່ງນີ້:

1. ວາງແຜນການໃນການລົງທຶນ;

2. ຈັດຫາ ແລະ ນໍາໃຊ້ວັດຖຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຊີຕ່າງໆ ເຂົ້າໃນການລົງທຶນ;

3. ເຂົ້າເຖິງຕະຫຼາດກາກບອນປ່າໄມ້ ພາຍໃນ ແລະ ຕ່າງປະເທດ;

4. ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທໍາ ທີ່ໄດ້ມາຈາກການລົງທຶນຂອງຕົນ;

5. ໄດ້ຮັບການອໍານວຍຄວາມສະດວກຈາກພາກລັດໃນດ້ານຕ່າງໆ ໃນການລົງທຶນຂອງຕົນ;

6. ໄດ້ຮັບຜົນປະໂຫຍດຈາກກາກບອນປ່າໄມ້ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

7. ສະເໜີ ກົມປ່າໄມ້ ເພື່ອພິຈາລະນາໂອນກໍາມະສິດກາກບອນປ່າໄມ້ ທີ່ສ້າງຂຶ້ນໃນພື້ນທີ່ປ່າໄມ້ທໍາມະຊາດ ເພື່ອນໍາໄປຂາຍໃຫ້ກັບຕະຫຼາດສະໝັກໃຈ;

8. ເປັນເຈົ້າກໍາມະສິດ ຕໍ່ ສິນເຊື່ອກາກບອນປ່າໄມ້ ທີ່ສ້າງຂຶ້ນໃນພື້ນທີ່ສວນປູກຂອງ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຕາມກົດໝາຍ ແລະ ລະບຽບການ;

9. ດໍາເນີນການ ຂາຍ ສິນເຊື່ອກາກບອນປ່າໄມ້ ພາຍຫຼັງໄດ້ຮັບການຢັ້ງຢືນ ແລະ ໄດ້ສິດໃນການໂອນ;

10. ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງ ຢູ່ ສປປ ລາວ;

11. ຍື່ນຄໍາຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນ ຖືກເສຍປະໂຫຍດໃນການລົງທຶນ;

12. ໄດ້ຮັບສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ພັນທະຂອງຜູ້ລົງທຶນ**

ຜູ້ລົງທຶນກາກບອນປ່າໄມ້ ມີ ພັນທະ ດັ່ງນີ້:

1. ປົກປັກຮັກສາ ຊັບພະຍາກອນປ່າໄມ້ ເພື່ອເປົ້າໝາຍຫຼຸດຜ່ອນການປ່ອຍ, ການດູດຊັບ ແລະ ການເກັບກັກທາດອາຍເຮືອນແກ້ວ;

2. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ຕ້ອງມອບງົບປະມານໃນການຄຸ້ມຄອງປົກປັກຮັກສາປ່າໄມ້, ຟື້ນຟູປ່າໄມ້ ແລະ ພັດທະນາຊຸມຊົນໃນເຂດພື້ນທີ່ໂຄງການ ໃຫ້ ກົມປ່າໄມ້ ຢ່າງໜ້ອຍ ສີ່ (4) ໂດລາສະຫະລັດ ຕໍ່ ເຮັກຕາ ຕໍ່ ປີ ເຂົ້າໃນກອງທຶນປົກປັກຮັກສາປ່າໄມ້ ໂດຍອີງຕາມພື້ນທີ່ປ່າໄມ້ຕົວຈິງ ທີ່ສາມາດຈັດຕັ້ງປະຕິບັດໂຄງການ;

4. ຖືບັນຊີຕາມ ກົດໝາຍ ວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ ຂອງ ສປປ ລາວ;

5. ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດ;

6. ພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;

7. ປະກອບສ່ວນທາງດ້ານງົບປະມານໃນວຽກງານ ຕິດຕາມ, ກວດກາໂຄງການລົງທຶນ;

8. ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນ ປະຈຳ ສາມເດືອນ, ຫົກເດືອນ ແລະ ປະຈຳປີ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;

9. ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;

10. ປະຕິບັດພັນທະດ້ານສັງຄົມ ແລະ ສິ່ງແວດລ້ອມ ຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນການປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;

11. ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມກົດໝາຍ ແລະ ລະບຽບການ;

12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 31 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການລົງທຶນວຽກງານກາກບອນປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຄ້າຂາຍ ກາກບອນປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງປ່າໄມ້ ແລະ ອົງການສາກົນທີ່ກ່ຽວຂ້ອງ;

3. ເຄື່ອນໄຫວ ແລະ ປ່ຽນແປງ ກຳມະສິດກາກບອນປ່າໄມ້ ໂດຍບໍ່ໄດ້ອະນຸຍາດ;

4. ດຳເນີນການຖາງປ່າ, ຈູດປ່າ ແລະ ວິທີການອື່ນ ເພື່ອສ້າງໂຄງການກາກບອນປ່າໄມ້;

5. ຂັດຂວາງ, ບໍ່ໃຫ້ຄວາມຮ່ວມມື ໃນການປະຕິບັດວຽກງານການບອນປ່າໄມ້ ຂອງເຈົ້າໜ້າທີ່ກ່ຽວຂ້ອງ;

6. ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 32 ຂໍ້ຫ້າມສຳລັບຜູ້ລົງທຶນ**

ຫ້າມ ຜູ້ລົງທຶນກາກບອນປ່າໄມ້ ມີພຶດຕິກຳ ດັ່ງນີ້:

1. ຈັບຈອງ ພື້ນທີ່ປ່າໄມ້ ໂດຍບໍ່ມີການສຶກສາຄວາມເປັນໄປໄດ້ ຕາມບົດບັນທຶກຄວາມເຂົ້າໃຈ;
2. ດຳເນີນການຖາງປ່າ, ຈູດປ່າ ແລະ ວິທີການອື່ນ ເພື່ອສ້າງໂຄງການກາກບອນປ່າໄມ້;
3. ຂັດຂວາງການພັດທະນາໂຄງການອື່ນ ທີ່ສົ່ງເສີມການອະນຸລັກ, ການປົກປັກຮັກສາ ແລະ ພັດທະນາປ່າໄມ້ ເຊັ່ນ ການທ່ອງທ່ຽວແບບອະນຸລັກ ແລະ ຮູບແບບລົງທຶນອື່ນ ທີ່ບໍ່ກະທົບຕໍ່ການພັດທະນາກາກບອນປ່າໄມ້ ໃນພື້ນທີ່ໂຄງການຂອງຕົນ;
4. ບໍ່ລາຍງານຜົນການຈັດຕັ້ງປະຕິບັດວຽກງານກາກບອນປ່າໄມ້ ຕາມທີ່ກຳນົດໄວ້ໃນສັນຍາຮ່ວມມື;
5. ບໍ່ຈ່າຍອາກອນລາຍໄດ້, ຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຫຼື ສັນຍາຮ່ວມມື;
6. ບໍ່ແບ່ງປັນຜົນປະໂຫຍດ ຕາມທີ່ກຳນົດໄວ້ໃນສັນຍາຮ່ວມມື;
7. ບໍ່ຮັບຮູ້ສິດຕໍ່ປ່າໄມ້ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນພື້ນທີ່ໂຄງການ;
8. ຄ້າຂາຍ ກາກບອນປ່າໄມ້ ໂດຍບໍ່ໄດ້ ຜ່ານການຢັ້ງຢືນຂອງອົງການທີ່ກ່ຽວຂ້ອງ ແລະ ປາສະຈາກການໂອນສິດຂອງພາກສ່ວນລັດ ໃຫ້ຜູ້ຊື້;
9. ໂອນສັນຍາຮ່ວມມືໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງກະສິກຳ ແລະ ປ່າໄມ້;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 33 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ, ຖ່ວງດຶງ ຫຼື ຮຽກເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ບຸກຄົນ;
2. ເປີດເຜີຍຄວາມລັບ ຂອງ ລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ປອມແປງເອກະສານ ຫຼື ອອກເອກະສານ ບໍ່ຖືກຕ້ອງ;
4. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈັບຍາບັນ ທີ່ກໍ່ໃຫ້ ເກີດຄວາມເສຍຫາຍ ຕໍ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ບໍ່ຖືກຕ້ອງຕາມລະບຽບການ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ກວດກາ ວຽກງານກາກບອນປ່າໄມ້

**ມາດຕາ 34 ອົງການຄຸ້ມຄອງວຽກງານກາກບອນປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງວຽກງານກາກບອນປ່າໄມ້ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງລະບຽບການ, ກຳນົດພື້ນທີ່ໂຄງການ ແລະ ມາດຕະຖານເຕັກນິກ ເພື່ອສາມາດຄ້າຂາຍ ສິນເຊື່ອກາກບອນໄດ້ ພ້ອມທັງກຳນົດວິທີການຄິດໄລ່ປະລິມານອັດຕາການປ່ອຍ ແລະ ການດູດຊັບທາດອາຍເຮືອນແກ້ວ ໃຫ້ສອດຄ່ອງກັບມາດຕະຖານການຫຼຸດຜ່ອນກາກບອນ.

ອົງການຄຸ້ມຄອງວຽກງານກາກບອນປ່າໄມ້ ປະກອບດ້ວຍ:

1. ກົມປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງກົມປ່າໄມ້**

ໃນການຄຸ້ມຄອງວຽກງານກາກບອນປ່າໄມ້ ກົມປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ກະຊວງກະສິກຳ ແລະ ປ່າໄມ້ ໃນການຮັບຄຳຮ້ອງ, ບົດສະເໜີຂໍການລົງທຶນ, ການທົບທວນບົດບັນທຶກຄວາມເຂົ້າໃຈ ແລະ ບົດບັນທຶກການຮ່ວມມື ວຽກງານກາກບອນປ່າໄມ້;

2. ພັດທະນາ, ສັງລວມ ແລະ ຄຸ້ມຄອງຂໍ້ມູນ ຂ່າວສານ ສະຖິຕິ ກ່ຽວກັບ ການຜະລິດ ແລະ ຄ້າຂາຍກາກບອນປ່າໄມ້;

3. ຮ່ວມກັບ ຜູ້ລົງທຶນ ວາງແຜນກິດຈະກຳ, ແຜນງົບປະມານ, ແຜນບຸກຄະລາກອນ, ວັດຖຸປະກອນ, ພາຫະນະ ແລະ ແຜນງານອື່ນ ເພື່ອໃຫ້ບັນລຸຕາມຈຸດປະສົງຂອງໂຄງການທີ່ໄດ້ກຳນົດໃນສັນຍາຮ່ວມມື;

4. ປະສານສົມທົບກັບ ຜູ້ລົງທຶນ, ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ດຳເນີນການງານສຳຫຼວດ, ກຳນົດເຂດແດນ, ປັກຫຼັກໝາຍ, ເຂດຂຸດໂຊມ ແລະ ຟື້ນຟູປ່າໄມ້, ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ໃຫ້ຊັດເຈນ ແລະ ແທດເໝາະກັບຄວາມເປັນຈິງ;

5. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຢັ້ງຢືນ ບົດລາຍງານການຈັດຕັ້ງປະຕິບັດ ໜ້າວຽກ ແລະ ກິດຈະກຳ ແຕ່ລະໄຕມາດ ທີ່ໄດ້ກຳນົດໄວ້ໃນ ສັນຍາຮ່ວມມື;

6. ຄົ້ນຄວ້າ ແລະ ນຳສະເໜີ ລັດຖະມົນຕີ ໂຈະ ຫຼື ຍົກເລີກ ສັນຍາຮ່ວມມື ໃນກໍລະນີ ຜູ້ລົງທຶນຈັດຕັ້ງປະຕິບັດໜ້າວຽກ ບໍ່ໄປຕາມທີ່ໄດ້ກຳນົດໄວ້ໃນສັນຍາຮ່ວມມື;

7. ຂຶ້ນທະບຽນທຸກໂຄງການສິນເຊື່ອກາກບອນ ແລະ ທຸກກິດຈະກຳ ທີ່ກຳລັງຈັດຕັ້ງປະຕິບັດການສຶກສາຄວາມເປັນໄປໄດ້ ໃນຕາໜ່າງຖານຂໍ້ມູນໂຄງການ ໃນລະບົບການຕິດຕາມປ່າໄມ້ແຫ່ງຊາດ ເພື່ອເປັນການຮັບປະກັນຄວາມໂປ່ງໃສ ແລະ ຫຼີກລ່ຽງການຊໍ້າຊ້ອນກັບບັນດາໂຄງການກາກບອນປ່າໄມ້ອື່ນ;

8. ຕິດຕາມ ແລະ ທວງຖາມ ການຈ່າຍພັນທະຕ່າງໆ ຂອງຜູ້ລົງທຶນ ແລະ ນຳສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ ກໍລະນີຜູ້ລົງທຶນບໍ່ປະຕິບັດພັນທະດັ່ງກ່າວ;

9. ພົວພັນ, ປະສານສົມທົບ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ລວມທັງຄະນະກຳມະການ, ຄະນະວິຊາການ ແລະ ບໍລິສັດ ເພື່ອເຊີນປະຊຸມປຶກສາຫາລືທາງດ້ານວິຊາການ ແຕ່ລະໄລຍະ ຫຼື ຕາມແຕ່ລະກໍລະນີ;

10. ອອກຄູ່ມືແນະນຳ ແລະ ເອກະສານວິຊາການອື່ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານກາກບອນປ່າໄມ້ ໃຫ້ໄດ້ຮັບຜົນດີ;

11. ຮັບ ແລະ ແກ້ໄຂບັນຫາທີ່ມີລັກສະນະບໍລິຫານ ກ່ຽວກັບວຽກງານກາກບອນປ່າໄມ້;

12. ສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ຮັບຮອງບົດລາຍງານການພິສູດ ແລະ ຢັ້ງຢືນ ກາກບອນປ່າໄມ້ ຂອງຜູ້ລົງທຶນ ເພື່ອໃຫ້ຜູ້ລົງທຶນສາມາດ ຄ້າຂາຍໄດ້;

13. ສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ອອກໜັງສືໂອນກຳມະສິດສິນເຊື່ອກາກບອນ ໃຫ້ຜູ້ລົງທຶນ ເພື່ອດຳເນີນການຄ້າຂາຍ ສິນເຊື່ອກາກບອນ ຕາມກົນໄກຕະຫຼາດ ລະດັບພາກພື້ນ ແລະ ສາກົນ;

14. ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄາລະກອນ ກ່ຽວກັບວຽກງານກາກບອນປ່າໄມ້;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານກາກບອນປ່າໄມ້ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດວຽກງານກາກບອນປ່າໄມ້ ຕາມການມອບໝາຍຂອງອົງການຄຸ້ມຄອງວຽກງານກາກບອນປ່າໄມ້ ຂັ້ນສູນກາງ;

2. ເຂົ້າຮ່ວມການສຶກສາຄວາມເປັນໄປໄດ້, ການກວດກາ ແລະ ຕິດຕາມພື້ນທີ່ ຂອງຄະນະວິຊາການຈາກຂັ້ນສູນກາງ;

3. ເຂົ້າຮ່ວມ ຕິດຕາມ, ກວດກາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດວຽກງານກາກບອນປ່າໄມ້ ໃນຂອບເຂດທ້ອງຖິ່ນຂອງຕົນ ຕໍ່ ກົມປ່າໄມ້;

4. ປະສານສົມທົບກັບບັນດາພະແນກການ, ອົງການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ

ໃນການຈັດຕັ້ງປະຕິບັດວຽກງານການບອນປ່າໄມ້;

5. ສະເໜີ ກະຊວງກະສິກໍາ ແລະ ປ່າໄມ້ ໂດຍຜ່ານ ກົມປ່າໄມ້ ພາຍຫຼັງທີ່ໄດ້ຮັບໜັງສືສະເໜີຂໍດໍາເນີນວຽກງານການບອນປ່າໄມ້ ຈາກຜູ້ຂໍການລົງທຶນ;

6. ເຂົ້າຮ່ວມ ຕິດຕາມ, ກວດກາ ການແບ່ງປັນຜົນປະໂຫຍດ, ການແກ້ໄຂຂໍ້ຂັດແຍ່ງ ແລະ ບັນຫາອື່ນ ທີ່ພົວພັນເຖິງ ວຽກງານການບອນປ່າໄມ້ ໃນຂອບເຂດ ແຂວງ, ນະຄອນຫຼວງວຽງຈັນ ຂອງຕົນ;

7. ພິຈາລະນາ ການສະເໜີຂອງຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ກ່ຽວກັບບັນຫາທີ່ພົວພັນເຖິງ ວຽກງານການບອນປ່າໄມ້ ໃນຂອບເຂດ ແຂວງ, ນະຄອນຫຼວງວຽງຈັນ ຂອງຕົນ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍ.

### ມາດຕາ 37 ສິດ ແລະ ໜ້າທີ່ຂອງຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ

ໃນການຄຸ້ມຄອງວຽກງານການບອນປ່າໄມ້ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດວຽກງານການບອນປ່າໄມ້ ຕາມການມອບໝາຍຂອງອົງການຄຸ້ມຄອງວຽກງານການບອນປ່າໄມ້ຂັ້ນແຂວງ;

2. ເຂົ້າຮ່ວມການສຶກສາຄວາມເປັນໄປໄດ້, ການກວດກາ ແລະ ຕິດຕາມພື້ນທີ່ ຂອງຄະນະວິຊາການຈາກຂັ້ນສູນກາງ ພາຍໃນຂອບເຂດເມືອງຂອງຕົນ;

3. ເຂົ້າຮ່ວມ ຕິດຕາມ, ກວດກາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດວຽກງານການບອນປ່າໄມ້ ໃນຂອບເຂດ ເມືອງຂອງຕົນ;

4. ສະເໜີ ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ເມື່ອໄດ້ໜັງສືສະເໜີ ຂໍດໍາເນີນວຽກງານການບອນປ່າໄມ້ ຈາກຜູ້ຂໍການລົງທຶນ;

5. ປະສານສົມທົບກັບບັນດາຫ້ອງການ, ອົງການຂັ້ນເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານການບອນປ່າໄມ້;

6. ເຂົ້າຮ່ວມ ຕິດຕາມ, ກວດກາ ການແບ່ງປັນຜົນປະໂຫຍດ, ການແກ້ໄຂຂໍ້ຂັດແຍ່ງ ແລະ ບັນຫາອື່ນ ທີ່ພົວພັນເຖິງວຽກງານການບອນປ່າໄມ້ ໃນຂອບເຂດເມືອງ ຂອງຕົນ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍ.

### ມາດຕາ 38 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ

ຂະແໜງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການປ່າໄມ້ ຄົ້ນຄວ້າ ນິຕິກໍາ, ເຂົ້າຮ່ວມ ແລະ ຕິດຕາມ ກວດກາ ການຄຸ້ມຄອງການຈັດຕັ້ງປະຕິບັດກິດຈະການ ການບອນປ່າໄມ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

### ມາດຕາ 39 ການກວດກາວຽກງານການບອນປ່າໄມ້

ການກວດກາ ວຽກງານການບອນປ່າໄມ້ ແມ່ນ ການກວດກາການຈັດຕັ້ງປະຕິບັດລະບຽບການພັດທະນາກິດຈະກໍາຂອງວຽກງານການບອນປ່າໄມ້ ເພື່ອໃຫ້ວຽກງານດັ່ງກ່າວ ຖືກຕ້ອງຕາມລະບຽບ, ກົດໝາຍ ຊຶ່ງມີ ສາມ ຮູບການ ຄື:

1. ການກວດກາຕາມປົກກະຕິ ແມ່ນການກວດກາຕາມແບບແຜນຢ່າງເປັນປະຈໍາ ແລະ ມີກໍານົດເວລາ ທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 40 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນວຽກງານການາບອນປ່າໄມ້ ຢ່າງມີປະສິດທິຜົນ ຈະໄດ້ຮັບ ການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 41 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນ ເມືອງ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 43 ຜົນສັກສິດ**

ຂໍ້ຕົກລົງ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 29 ຕຸລາ 2024 ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ລິນຄຳ ດວງສະຫວັນ